**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນແຂວງ

ເລກທີ ....65..../ສພຂ.ຊຍ

ໄຊຍະບູລີ, ວັນທີ....12....ສິງຫາ 2022

# ມະຕິ

## ກອງປະຊຸມສະພາປະຊາຊົນແຂວງ ວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການທ່ອງທ່ຽວສີຂຽວ ຕິດພັນກັບການປ້ອງກັນ ແລະ ຮັບມືການແຜ່ລະບາດຂອງພະຍາດໂຄວິດ-19

- ອີງຕາມ ລັດຖະທຳມະນູນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 63/ສພຊ, ລົງວັນທີ 8 ທັນວາ 2015, ມາດຕາ 77 ວ່າດ້ວຍສິດ ແລະ ໜ້າທີ່ຂອງສະພາປະຊາຊົນຂັ້ນແຂວງ;
- ອີງຕາມ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍ ວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍ ວ່າດ້ວຍສະພາປະຊາຊົນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020, ມາດຕາ 60 ຂໍ້ 1;
- ອີງຕາມ ກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ) ສະບັບເລກທີ 12/ສພຊ, ລົງວັນທີ 15 ພະຈິກ 2016;
- ອີງຕາມ ບົດລາຍງານຂອງພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ກ່ຽວກັບການຈັດຕັ້ງປະຕິບັດແຜນການທ່ອງທ່ຽວສີຂຽວຕິດພັນກັບການປ້ອງກັນ ແລະ ຮັບມືການແຜ່ລະບາດຂອງພະຍາດໂຄວິດ-19 ສະບັບເລກທີ 834/ຖວທ, ລົງວັນທີ 27 ກໍລະກົດ 2022.

ຜ່ານການຄົ້ນຄວ້າ, ປະກອບຄຳເຫັນ ແລະ ພິຈາລະນາຢ່າງກວ້າງຂວາງ ດ້ວຍຄວາມຮັບຜິດຊອບສູງຕໍ່ໜ້າທີ່ການເມືອງຂອງສະມາຊິກສະພາປະຊາຊົນແຂວງ ໃນຖານະທີ່ເປັນຕົວແທນແຫ່ງສິດຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ ຕໍ່ບົດລາຍງານຂອງພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ກ່ຽວກັບການຈັດຕັ້ງປະຕິບັດ ແຜນການທ່ອງທ່ຽວສີຂຽວຕິດພັນກັບການປ້ອງກັນ ແລະ ຮັບມືການແຜ່ລະບາດຂອງພະຍາດໂຄວິດ-19 ໃນວາລະກອງປະຊຸມສະໄໝສາມັນ ເທື່ອທີ 3 ຂອງສະພາປະຊາຊົນແຂວງ ຊຸດທີ II, ຄັ້ງວັນທີ 11 ສິງຫາ 2022.

**ກອງປະຊຸມຕົກລົງ :**

**ມາດຕາ 1 ຮັບຮອງເອົາບົດລາຍງານຂອງພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ກ່ຽວກັບການຈັດຕັ້ງປະຕິບັດແຜນການທ່ອງທ່ຽວສີຂຽວ ຕິດພັນກັບການປ້ອງກັນ ແລະ ຮັບມື ການແຜ່ລະບາດຂອງພະຍາດໂຄວິດ-19.**

ກອງປະຊຸມສະແດງຄວາມຊົມເຊີຍ ແລະ ເຫັນດີເປັນເອກະພາບຕໍ່ບົດລາຍງານຂອງພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໃນການຈັດຕັ້ງປະຕິບັດແຜນການທ່ອງທ່ຽວສີຂຽວຕິດພັນກັບການປ້ອງກັນ ແລະ ຮັບມືການແຜ່ລະບາດຂອງພະຍາດໂຄວິດ-19 ເຊິ່ງພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໄດ້ມີຄວາມພະຍາຍາມສູ້ຊົນຈັດຕັ້ງປະຕິບັດແຜນພັດທະນາການທ່ອງທ່ຽວ 5 ປີ (2021-2025) ໂດຍສະເພາະແຜນປະຕິບັດງານກ່ຽວກັບການຟື້ນຟູ

ການທ່ອງທ່ຽວ ທີ່ປອດໄພຈາກພະຍາດໂຄວິດ-19 ໄດ້ມີຜົນສຳເລັດຫຼາຍດ້ານ ເປັນຕົ້ນ ການສ້າງຖານຂໍ້ມູນ, ການພັດທະນາແຫຼ່ງທ່ອງທ່ຽວ, ໂຄງການລາວທ່ຽວລາວ, ການກະກຽມເປີດແຂວງຕ້ອນຮັບນັກທ່ອງທ່ຽວແບບເຕັມຮູບແບບ ສາມາດດຶງດູດນັກທ່ອງທ່ຽວເຂົ້າມາທ່ຽວພາຍໃນແຂວງໄດ້ຫຼາຍຂຶ້ນ ສ້າງລາຍຮັບໃຫ້ແກ່ແຂວງ ແລະ ປະຊາຊົນບັນດາເຜົ່າ, ປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ.

ໄປຄຽງຄູ່ກັນນັ້ນ, ການໂຄສະນາເຜີຍແຜ່ບັນດານິຕິກຳທີ່ຕິດພັນກັບການເປີດທ່ອງທ່ຽວສີຂຽວບໍ່ທັນເລິກເຊິ່ງ, ກວ້າງຂວາງ ແລະ ທົ່ວເຖິງບັນດາກຸ່ມເປົ້າໝາຍ ເຮັດໃຫ້ການຈັດຕັ້ງປະຕິບັດບໍ່ເຂັ້ມງວດ, ກົນໄກ ແລະ ວິທີການປະສານງານລະຫວ່າງ ພາກສ່ວນທີ່ກ່ຽວຂ້ອງບໍ່ທັນລະອຽດ, ຈະແຈ້ງ ແລະ ຄ່ອງໂຕເທົ່າທີ່ຄວນ; ການຝຶກອົບຮົມພາຍໃຕ້ໂຄງການ Laosafe ໃຫ້ແກ່ກຸ່ມເປົ້າໝາຍຍັງຈັດຕັ້ງປະຕິບັດບໍ່ທັນໄດ້ດີ, ແຫຼ່ງທ່ອງທ່ຽວຫຼາຍແຫ່ງ ຍັງບໍ່ທັນໄດ້ຮັບການພັດທະນາ, ນະໂຍບາຍຊຸກຍູ້ສົ່ງເສີມຜູ້ປະກອບການທຸລະກິດການທ່ອງທ່ຽວຍັງມີໜ້ອຍ ເຊິ່ງເຮັດໃຫ້ການທ່ອງທ່ຽວພາຍໃນແຂວງ ມີຫຼາຍດ້ານພົບຄວາມຫຍຸ້ງຍາກ.

**ມາດຕາ 2 ຮັບຮອງເອົາທິດທາງແຜນການໃນຕໍ່ໜ້າ ກ່ຽວກັບການຈັດຕັ້ງປະຕິບັດ ແຜນການທ່ອງທ່ຽວສີຂຽວ ຕິດພັນກັບການປ້ອງກັນ ແລະ ຮັບມືການແຜ່ລະບາດຂອງພະຍາດໂຄວິດ-19.**

ກອງປະຊຸມເຫັນດີເປັນເອກະພາບ ຕໍ່ບັນດາເນື້ອໃນທີ່ກຳນົດໄວ້ໃນທິດທາງແຜນການຕໍ່ໜ້າ ເຊິ່ງປະກອບມີ 10 ວຽກຕົ້ນຕໍ ແລະ 3 ມາດຕະການ ຄື: (1) ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ, ຫ້ອງການຖະແຫຼງຂ່າວວັດທະນະທຳ ແລະ ທ່ອງທ່ຽວເມືອງ ຕ້ອງໄດ້ເຊື່ອມຊຶມ ແລ້ວນຳໄປຈັດຕັ້ງຜັນຂະຫຍາຍ ໃຫ້ໄດ້ຮັບຜົນສຳເລັດ. (2) ພາກສ່ວນທີ່ກ່ຽວຂ້ອງ ຕ້ອງໄດ້ເອົາໃຈໃສ່ເພີ່ມທະວີ ແລະ ມີສ່ວນຮ່ວມໃນການພັດທະນາວຽກງານທ່ອງທ່ຽວໃຫ້ຫຼາຍຂຶ້ນ. (3) ຕ້ອງໄດ້ມີການກວດກາ, ຕິດຕາມປະເມີນຜົນ ແລະ ຖອດຖອນບົດຮຽນ ເພື່ອລາຍງານ ແລະ ຂໍທິດຊີ້ນຳຈາກຂັ້ນເທິງເປັນປົກກະຕິ.

ເພື່ອຮັບປະກັນການຈັດຕັ້ງບັນດາທິດທາງແຜນການ ແລະ ມາດຕະການຈັດຕັ້ງປະຕິບັດແຜນການທ່ອງທ່ຽວສີຂຽວຕິດພັນກັບການປ້ອງກັນ ແລະ ຮັບມືການແຜ່ລະບາດຂອງພະຍາດໂຄວິດ-19 ໃຫ້ບັນລຸຄາດໝາຍທີ່ວາງໄວ້ ກອງປະຊຸມສະເໜີໃຫ້ພະແນກພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເອົາໃຈໃສ່ບາງມາດຕະການເພີ່ມເຕີມ ດັ່ງນີ້:

1) ຄົ້ນຄວ້າພິຈາລະນາ ໃຫ້ບູລິມະສິດແກ່ການພັດທະນາວຽກງານທ່ອງທ່ຽວ ເພື່ອຫັນໄປສູ່ທັນສະໄໝເທື່ອລະກ້າວ. ປະສານສົມທົບກັບພະແນກການທີ່ກ່ຽວຂ້ອງເອົາໃຈໃສ່ພັດທະນາພື້ນຖານໂຄງລ່າງ, ເສັ້ນທາງ, ປ້າຍຊີ້ບອກ, ສະຖານທີ່ທ່ອງທ່ຽວ ໃຫ້ສາມາດຕ້ອນຮັບນັກທ່ອງທ່ຽວໄດ້ເຕັມຮູບແບບ, ການຈັດຕັ້ງປະຕິບັດບັນດາໂຄງການລົງທຶນຕ່າງໆ ບໍ່ໃຫ້ທັບຊ້ອນ ແລະ ສົ່ງຜົນກະທົບທາງລົບຕໍ່ແຫຼ່ງທ່ອງທ່ຽວທາງທຳມະຊາດ, ປະຫວັດສາດ ແລະ ວັດທະນະທຳ ແນໃສ່ເຮັດໃຫ້ແຫຼ່ງທ່ອງທ່ຽວມີຄວາມຍືນຍົງ;

2) ເພີ່ມທະວີການຮ່ວມມືລະຫວ່າງພາກລັດ, ຜູ້ປະກອບການ, ເອກະຊົນທັງພາຍໃນ ແລະ ຕ່າງປະເທດ ເພື່ອປັບປຸງຖານຂໍ້ມູນການບໍລິການການທ່ອງທ່ຽວໃຫ້ມີຄວາມຫຼາກຫຼາຍ, ເປັນລະບົບຄົບຊຸດ ແລະ ທັນສະໄໝ, ມີຖານຂໍ້ມູນເຊື່ອມຈອດກັບບັນດາແຂວງ, ປະເທດໃກ້ຄຽງ ພ້ອມທັງມີການໂຄສະນາຜ່ານສື່ ແລະ ຮູບການອື່ນ ເພື່ອດຶງດູດນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດ;

3) ເພີ່ມທະວີໂຄສະນາສຸຂະສຶກສາ, ເອົາໃຈໃສ່ປະຕິບັດວິຖີການດຳລົງຊີວິດແບບໃໝ່, ປະສານສົມທົບກັບພະແນກການທີ່ກ່ຽວຂ້ອງສະໜອງວັກຊີນເຂັມ 2, ເຂັມກະຕຸ້ນປ້ອງກັນພະຍາດໂຄວິດ-19 ໃຫ້ໄດ້ຫຼາຍກວ່າ 85% ຂຶ້ນໄປ, ພ້ອມນັ້ນ ຕ້ອງຮັບປະກັນມາດຕະການປ້ອງກັນພະຍາດໂຄວິດ-19 ໃຫ້ນັກທ່ອງທ່ຽວມີຄວາມປອດໄພ ໄປຄວບຄູ່ກັບການເຝົ້າລະວັງການລະບາດຂອງພະຍາດອື່ນທີ່ອາດຈະເກີດຂຶ້ນ;

4) ປະສານສົມທົບກັບຂະແໜງການ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການອຳນວຍຄວາມສະດວກໃຫ້ແກ່ນັກທ່ອງທ່ຽວ ເປັນຕົ້ນ: ການສະໜອງຂໍ້ມູນໃຫ້ນັກທ່ອງທ່ຽວຢູ່ກັບດ່ານ, ເພີ່ມອາຍຸວີຊານັກທ່ອງທ່ຽວ, ການນຳທ່ຽວ ແລະ ອື່ນໆ ເພື່ອດຶງດູດນັກທ່ອງທ່ຽວໃຫ້ເຂົ້າມາທ່ອງທ່ຽວຢູ່ແຂວງໄຊຍະບູລີຫຼາຍຂຶ້ນ;

5) ຄົ້ນຄວ້າອອກນິຕິກຳໃຕ້ກົດໝາຍ ເພື່ອຄຸ້ມຄອງແຫຼ່ງທ່ອງທ່ຽວ, ເມືອງທ່ອງທ່ຽວສີຂຽວ ໃຫ້ໄດ້ຮັບການປົກປັກຮັກສາ ແລະ ອານຸລັກໃຫ້ຍືນຍົງ, ສ້າງນະໂຍບາຍໃນການຊຸກຍູ້, ສົ່ງເສີມພູມປັນຍາທ້ອງຖິ່ນ ເພື່ອສ້າງຜະລິດຕະພັນການທ່ອງທ່ຽວທີ່ຫຼາກຫຼາຍ, ລວມທັງເຄື່ອງທີ່ລະນຶກທີ່ເປັນເອກະລັກຂອງແຕ່ລະເຜົ່າ, ແຕ່ລະທ້ອງຖິ່ນ;

6) ເອົາໃຈໃສ່ພັດທະນາພື້ນຖານໂຄງລ່າງການທ່ອງທ່ຽວໃຫ້ດີຂຶ້ນ, ປະສານສົມທົບກັບພະແນກການທີ່ກ່ຽວຂ້ອງຄຸ້ມຄອງຄວາມປອດໄພ, ລາຄາສິນຄ້າ, ອາຫານ, ເຄື່ອງດື່ມ, ຄ່າພັກເຊົາ, ຄ່າຂົນສົ່ງ, ຄ່າໂດຍສານ, ຄ່າປີ້ເຂົ້າຊົມແຫຼ່ງທ່ອງທ່ຽວ ແລະ ອື່ນໆ ເພື່ອສ້າງຄວາມປະທັບໃຈ ແລະ ດຶງດູດນັກທ່ອງທ່ຽວໃຫ້ມາທ່ຽວພາຍໃນແຂວງໃຫ້ເພີ່ມຂຶ້ນ.

**ມາດຕາ 3 ການຈັດຕັ້ງປະຕິບັດ**

ມອບໃຫ້ອົງການປົກຄອງແຂວງ ຊີ້ນຳພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ຂະແໜງການທີ່ກ່ຽວຂ້ອງ, ອົງການປົກຄອງເມືອງ ໂຄສະນາ, ເຜີຍແຜ່ ແລະ ຈັດຕັ້ງປະຕິບັດມະຕິສະບັບນີ້ຢ່າງເຂັ້ມງວດ.

ມອບໃຫ້ຄະນະປະຈຳສະພາປະຊາຊົນແຂວງ ຊີ້ນຳຄະນະກຳມະການ, ຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ ດຳເນີນການຊຸກຍູ້ ແລະ ຕິດຕາມກວດກາ ການຈັດຕັ້ງປະຕິບັດມະຕິສະບັບນີ້ ຕາມພາລະບົດບາດ ແລະ ຂອບເຂດຄວາມຮັບຜິດຊອບຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 4 ຜົນສັກສິດ**

ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານສະພາປະຊາຊົນແຂວງ**

**ເພັງນິລັນ ຄຳພັນເພັງ**